ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ລັດຖະບານ

ເລກທີ 24 /ລບ
ນະຄອນຫຼວງວຽງຈັນ, ວັນທີ 16.01.2017.

# ດຳລັດ
## ວ່າດ້ວຍການສຶກສາສົງ

- ອີງຕາມກົດໝາຍວ່າດ້ວຍລັດຖະບານ ( ສະບັບປັບປຸງ ) ສະບັບເລກທີ 69/ສພຊ, ລົງວັນທີ 15 ທັນວາ 2015;
- ອີງຕາມກົດໝາຍວ່າດ້ວຍການສຶກສາ ( ສະບັບປັບປຸງ ) ສະບັບເລກທີ 62/ສພຊ, ລົງວັນທີ 16 ກໍລະກົດ 2015;
- ອີງຕາມໜັງສືສະເໜີຂອງກະຊວງສຶກສາທິການ ແລະ ກິລາ ສະບັບເລກທີ 1540/ ສສກ.ຈຕ,ລົງວັນທີ 28 ຕຸລາ 2016;
- ອີງຕາມ ໜັງສືສະເໜີຂອງກະຊວງຍຸຕິທຳ ສະບັບເລກທີ 1065/ກຍ, ລົງວັນທີ 17 ພະຈິກ 2016.

## ລັດຖະບານ ອອກດຳລັດ:

### ໝວດທີ 1
### ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ດຳລັດສະບັບນີ້ ກຳນົດຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບການຄຸ້ມຄອງ, ການຕິດຕາມກວດກາວຽກງານສຶກສາສົງໃຫ້ມີຄຸນນະພາບ ແລະ ກ້າວໜ້າ ເພື່ອພັດທະນາພຣະສົງ, ສາມະເນນ ແລະ ອຸປາສົກ-ອຸປາສິກາ ໃຫ້ມີຄວາມຮູ້, ຄວາມສາມາດ ແລະ ສະຕິປັນຍາທາງພຸດທະສາສະໜາ, ວິທະຍາ ສາດທຳມະຊາດ, ວິທະຍາສາດສັງຄົມ; ໃຫ້ກາຍເປັນພົນລະເມືອງດີ, ມີສິນທຳ, ຈະຣິຍະທຳ ແລະ ຄຸນນະທຳ ປະກອບສ່ວນເຂົ້າໃນການປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດ.

**ມາດຕາ 2 : ການສຶກສາສົງ**

ການສຶກສາສົງ ແມ່ນຂະບວນການສອນ, ການຮຽນຮູ້ ທາງພຸດທະສາສະໜາ, ວິທະຍາສາດທຳມະຊາດ, ວິທະຍາສາດສັງຄົມ, ພຶດຕິກຳສາດ,ພາສາ ແລະ ອັກສອນສາດ.

ມາດຕາ 3: ການອະທິບາຍຄໍາສັບ

ຄໍາສັບທີ່ນໍາໃຊ້ໃນດໍາລັດສະບັບນີ້ ມີຄວາມໝາຍດັ່ງນີ້:

1. ບັນພະຊິດ ໝາຍເຖິງນັກບວດ;
2. ຄະຣີຫັດ ໝາຍເຖິງອອກຕົນຍາດໂຍມ ຜູ້ບໍ່ແມ່ນນັກບວດ;
3. ຜູ້ບໍລິຫານການສຶກສາສົງ ໝາຍເຖິງຫົວໜ້າ ແລະ ຮອງຫົວໜ້າກໍາມາທິການສຶກສາສົງຂັ້ນ ຕ່າງໆ, ຫົວໜ້າ ແລະ ຮອງຫົວໜ້າສະຖານການສຶກສາສົງ;
4. ເງິນນິດຈະພັດ ໝາຍເຖິງເງິນທີ່ເບີກຈ່າຍເປັນປົກກະຕິໃນແຕ່ລະເດືອນ ໃຫ້ແກ່ບັນພະຊິດທີ່ເປັນຄູ ແລະ ບຸກຄະລາກອນການສຶກສາສົງ;
5. ການສຶກສາສາຍປະຣິຍັດຕິທໍາ ໝາຍເຖິງການຮຽນການສອນກ່ຽວກັບພຸດທະສາສະໜາ ເປັນຕົ້ນຕໍ.
6. ການສຶກສາສາຍສາມັນສຶກສາສົງ ໝາຍເຖິງການຮຽນການສອນ ແບບປະສົມປະສານລະຫວ່າງພຸດທະສາສະໜາກັບສາຍສາມັນທາງໂລກ;
7. ການສຶກສາບັນດິດວິທະຍາ ໝາຍເຖິງການສຶກສາພາຍຫຼັງຮຽນຈົບສາຍປະຣິຍັດຕິທໍາ ແລະ ສາຍສາມັນສຶກສາສົງ;
8. ສາສະນະກິດ ໝາຍເຖິງວຽກງານທາງສາສະໜາ;
9. ລັດຖະກິດ ໝາຍເຖິງວຽກງານທາງລັດຖະການ;
10. ອຸປາສົກ ໝາຍເຖິງພໍ່ອອກ;
11. ອຸປາສິກາ ໝາຍເຖິງແມ່ອອກ;
12. ພຣະພິກຂຸ ໝາຍເຖິງນັກບວດທີ່ຖືສິນສອງຮ້ອຍຊາວເຈັດ;
13. ສາມະເນນ ໝາຍເຖິງນັກບວດທີ່ຖືສິນສິບ;
14. ພໍ່ຂາວ ໝາຍເຖິງ ຜູ້ຊາຍທີ່ເປັນນັກບວດທີ່ຖືສິນແປດ;
15. ແມ່ຂາວ ໝາຍເຖິງຜູ້ຍິງທີ່ເປັນນັກບວດທີ່ຖືສິນແປດ;
16. ສາສະນິກະຊົນ ໝາຍເຖິງຜູ້ທີ່ເຫຼື້ອມໃສໃນສາສະໜາ;
17. ພຣະທໍາມະ ໝາຍເຖິງຫຼັກຄໍາສອນທີ່ເປັນເຫດ ແລະ ເປັນຜົນ;
18. ພຣະວິໄນ ໝາຍເຖິງລະບຽບຂອງບັນພະຊິດໃນພຸດທະສາສະໜາ.

ມາດຕາ 4: ນະໂຍບາຍຂອງລັດກ່ຽວກັບວຽກງານການສຶກສາສົງ

ລັດກໍານົດເອົາການສຶກສາສົງ ເປັນສ່ວນໜຶ່ງຂອງລະບົບການສຶກສາແຫ່ງຊາດ ໃນການພັດທະນາຊັບພະຍາກອນມະນຸດ.

ລັດ ສົ່ງເສີມວຽກງານການສຶກສາສົງ ດ້ວຍການປະກອບບຸກຄະລາກອນ, ສະໜອງງົບປະມານ, ກໍ່ສ້າງພື້ນຖານໂຄງລ່າງ, ມີນະໂຍບາຍຕໍ່ຄູ ແລະ ບຸກຄະລາກອນການສຶກສາສົງ ຕາມລະບຽບການ.

ລັດ ສົ່ງເສີມ ແລະ ຊຸກຍູ້ ໃຫ້ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງທັງພາຍໃນ ແລະ ຕ່າງປະເທດ ປະກອບສ່ວນເຂົ້າໃນການພັດທະນາການສຶກສາສົງ ຕາມກົດໝາຍ ແລະ ນະໂຍບາຍຂອງລັດຖະບານ.

ມາດຕາ 5 : ຫຼັກການ ການເຄື່ອນໄຫວວຽກງານການສຶກສາສົງ

ວຽກງານການສຶກສາສົງ ຕ້ອງເຄື່ອນໄຫວຕາມຫຼັກການພື້ນຖານ ດັ່ງນີ້:

1. ປະຕິບັດຕາມແນວທາງນະໂຍບາຍຂອງພັກ, ກົດໝາຍຂອງລັດ ແລະ ແຜນນະໂຍບາຍຂອງ ອົງການພຸດທະສາສະໜາສໍາພັນລາວ;

2. ປົດຫຼັກພຣະທຳມະວິໄນ ຂອງພຸດທະສາສະໜາ ທີ່ມີລັກສະນະຊາດ, ວິທະຍາສາດ ແລະ ມະຫາຊົນ;
3. ຕອບສະໜອງຄວາມຮຽກຮ້ອງຕ້ອງການຂອງການພັດທະນາພຸດທະສາສະໜາ ແລະ ປະກອບສ່ວນຢ່າງຕັ້ງໜ້າເຂົ້າໃນການພັດທະນາປະເທດຊາດ;
4. ຮັບປະກັນຄຸນນະພາບ ແລະ ເຊື່ອມໂຍງກັບພາກພື້ນ ແລະ ສາກົນ.

**ມາດຕາ 6 ພາລະກິດໃນການພັດທະນາການສຶກສາສົງ**

ອົງການຈັດຕັ້ງທັງພາກລັດ ແລະ ເອກະຊົນ, ອົງການຈັດຕັ້ງທາງສັງຄົມ, ກອງທຶນມູນນິທິ, ບຸກຄົນ, ນິຕິບຸກຄົນ ແລະ ສາສະນິກະຊົນ ທີ່ມີໃຈໃສສັດທາ ທັງພາຍໃນ ແລະ ຕ່າງປະເທດ ສາມາດປະກອບສ່ວນເຂົ້າໃນການພັດທະນາ ແລະ ສົ່ງເສີມວຽກງານການສຶກສາສົງຂອງລາວ ຕາມແຜນນະໂຍບາຍຂອງອົງການພຸດທະສາສະໜາສຳພັນລາວ, ແນວທາງນະໂຍບາຍຂອງພັກ ແລະ ກົດໝາຍຂອງລັດ.

**ມາດຕາ 7: ຂອບເຂດການນຳໃຊ້ດຳລັດ**

ດຳລັດສະບັບນີ້ ນຳໃຊ້ສຳລັບພຣະສົງ, ສາມະເນນ, ອຸປາສົກ ແລະ ອຸປາສິກາ ລວມທັງນິຕິບຸກຄົນ ແລະ ການຈັດຕັ້ງຂອງຊາວພຸດຕ່າງດ້າວ ທີ່ເຄື່ອນໄຫວວຽກງານການສຶກສາສົງ ໃນ ສປປ ລາວ.

## ໝວດທີ 2
## ໂຄງປະກອບ ແລະ ລະບົບການສຶກສາສົງ

**ມາດຕາ 8 ໂຄງປະກອບຂອງການສຶກສາສົງ**

ໂຄງປະກອບ ຂອງການສຶກສາສົງ ມີດັ່ງນີ້:

1. ການສຶກສາ ສາຍປະຣິຍັດຕິທຳ;
2. ການສຶກສາ ສາຍສາມັນສຶກສາສົງ;
3. ການສຶກສາ ບັນດິດວິທະຍາ.

**ມາດຕາ 9 ການສຶກສາສາຍປະຣິຍັດຕິທຳ**

ການສຶກສາສາຍປະຣິຍັດຕິທຳ ມີລະບົບການຮຽນການສອນ ສາມຊັ້ນ ໃຊ້ເວລາ ເກົ້າ ປີ ດັ່ງນີ້:

1. ຊັ້ນນັກທຳໃຊ້ເວລາ ສາມ ປີ;
2. ຊັ້ນປະຣິຍັດຕິທຳຕອນຕົ້ນໃຊ້ເວລາ ສາມ ປີ;
3. ຊັ້ນປະຣິຍັດຕິທຳຕອນປາຍໃຊ້ເວລາ ສາມ ປີ.

**ມາດຕາ 10 ການສຶກສາສາຍສາມັນສຶກສາສົງ**

ການສຶກສາສາຍສາມັນສຶກສາສົງ ມີລະບົບການຮຽນ-ການສອນ ສອງຊັ້ນ ໃຊ້ເວລາເຈັດປີ ດັ່ງນີ້:

1. ຊັ້ນມັດທະຍົມສຶກສາສົງຕອນຕົ້ນ ໃຊ້ເວລາ ສີ່ ປີ;
2. ຊັ້ນມັດທະຍົມສຶກສາສົງຕອນປາຍ ໃຊ້ເວລາ ສາມ ປີ.

**ມາດຕາ 11 ການສຶກສາບັນດິດວິທະຍາ**

ການສຶກສາບັນດິດວິທະຍາ ມີລະບົບການຮຽນ-ການສອນ ດັ່ງນີ້:

1. ອະນຸບັນດິດ (ອດ) ຫຼັກສູດປົກກະຕິ ໃຊ້ເວລາສອງປີ ຂຶ້ນໄປ ແລະ ຫຼັກສູດຕໍ່ເນື່ອງ ໃຊ້ເວລາ ໜຶ່ງປີເຄິ່ງຂຶ້ນໄປ;

2. ຊັ້ນບັນດິດ (ບດ) ຫຼັກສູດປົກກະຕິ ໃຊ້ເວລາ ສີ່ປີ ຂຶ້ນໄປ ແລະ ຫຼັກສູດຕໍ່ເນື່ອງ ໃຊ້ເວລາສອງປີ ຂຶ້ນໄປ;
3. ຊັ້ນອັກຄະບັນດິດ (ອບ)ໃຊ້ເວລາ ສອງປີ ຂຶ້ນໄປ;
4. ຊັ້ນມະຫາອັກຄະບັນດິດ (ມອ) ໃຊ້ເວລາ ສາມປີ ຂຶ້ນໄປ.

**ມາດຕາ 12 ການສຶກສາພາກບັງຄັບ**

ການສຶກສາຊັ້ນປະຖົມ ແລະ ການສຶກສາຊັ້ນມັດທະຍົມສຶກສາສົງຕອນຕົ້ນ ເປັນການສຶກສາພາກ ບັງຄັບ ຊຶ່ງພຣະພິກຂຸ ແລະ ສາມະເນນຕ້ອງຮຽນໃຫ້ຈົບ.

**ໝວດທີ 3**
**ຫຼັກສູດການສຶກສາສົງ**

**ມາດຕາ 13 ຫຼັກສູດສາຍປະຣິຍັດຕິທຳ**

ຫຼັກສູດສາຍປະຣິຍັດຕິທຳ ປະກອບດ້ວຍວິຊາທີ່ກ່ຽວກັບພຸດທະສາສະໜາເຈັດສິບສ່ວນຮ້ອຍ ແລະ ວິຊາ ວິທະຍາສາດທຳມະຊາດ-ສັງຄົມ ສາມສິບສ່ວນຮ້ອຍ.

**ມາດຕາ 14 ຫຼັກສູດສາຍສາມັນສຶກສາສົງ**

ຫຼັກສູດສາຍສາມັນສຶກສາສົງ ປະກອບດ້ວຍຫຼັກສູດສາມັນສຶກສາຂອງກະຊວງສຶກສາທິການ ແລະ ກິລາ ເຈັດສິບສ່ວນຮ້ອຍ ແລະ ວິຊາທີ່ກ່ຽວກັບພຸດທະສາສະໜາສາມສິບສ່ວນຮ້ອຍ.

**ມາດຕາ 15 ຫຼັກສູດບັນດິດວິທະຍາ**

ຫຼັກສູດການສຶກສາບັນດິດວິທະຍາ ໄດ້ກຳນົດເປັນແຕ່ລະຊັ້ນຄື ຊັ້ນອະນຸບັນດິດ, ຊັ້ນບັນດິດຈັດ ເປັນສາຍ ຫຼື ລາຍວິຊາ, ສ່ວນຫຼັກສູດຊັ້ນອັກຄະບັນດິດ ແລະ ມະຫາອັກຄະບັນດິດ ແມ່ນລົງເລິກສະເພາະດ້ານ ເພື່ອ ສ້າງນັກວິຊາການໃຫ້ມີຄວາມຊຳນິຊຳນານ ແລະ ຊ່ຽວຊານ.

**ມາດຕາ 16 ເນື້ອໃນຫຼັກສູດການສຶກສາສົງ**

ເນື້ອໃນຫຼັກສູດການສຶກສາສົງ ໄດ້ກຳນົດສະເພາະໃນແຕ່ລະໄລຍະ ເພື່ອໃຫ້ສອດຄ່ອງກັບແນວທາງ ນະໂຍບາຍຂອງພັກ, ກົດໝາຍວ່າດ້ວຍການສຶກສາ, ສະພາບທັນປ່ຽນທາງການສຶກສາຂອງພາກພື້ນ ແລະ ສາກົນ ໂດຍ ອີງການພຸດທະສາສະໜາສຳພັນລາວ ແລະ ກະຊວງສຶກສາທິການ ແລະ ກິລາຮ່ວມກັນກຳນົດ.

**ມາດຕາ 17 ພາສາ ແລະ ອັກສອນ ທີ່ໃຊ້ໃນການຮຽນ-ການສອນ ໃນສະຖານການສຶກສາສົງ**

ພາສາ ແລະ ອັກສອນທີ່ໃຊ້ໃນການຮຽນ-ການສອນ ໃນສະຖານການສຶກສາສົງທຸກຊັ້ນ, ທຸກສາຍ ແລະ ທຸກລະດັບ ແມ່ນພາສາກ່ຽວກັບພຸດທະສາສະໜາ, ພາສາລາວ ແລະ ອັກສອນລາວ.

ລັດສົ່ງເສີມການຮຽນ-ການສອນ ພາສາຕ່າງປະເທດ.

**ມາດຕາ 18 ໄລຍະເວລາຂອງການປະຕິບັດຫຼັກສູດການສຶກສາສົງ**

ໄລຍະເວລາຂອງການປະຕິບັດຫຼັກສູດການສຶກສາສົງ ໃນສົກຮຽນໜຶ່ງ ແມ່ນໃຊ້ເວລາສາມສິບທິກອາ ທິດ ໂດຍຈັດເປັນໄຕຣມາດ ຫຼື ເປັນພາກຮຽນ ຊຶ່ງໄຕຣມາດ ຫຼື ພາກຮຽນທີໜຶ່ງເລີ່ມຕົ້ນ ແຕ່ອາທິດທີໜຶ່ງຂອງເດືອນ ມິຖຸນາ ຫຼື ຈັດຂະໜານກັບການສຶກສາຂອງລັດກໍໄດ້ ຕາມການຕົກລົງຂອງກຳມາທິການສຶກສາສົງ ໃນແຕ່ລະສົກຮຽນ.

## ໝວດທີ 4: ສະຖານການສຶກສາສົງ

### ມາດຕາ 19 ສະຖານການສຶກສາສົງ ສາຍປະຣິຍັດຕິທຳ

ສະຖານການສຶກສາສົງສາຍປະຣິຍັດຕິທຳປະກອບດ້ວຍໂຮງຮຽນນັກທຳ, ໂຮງຮຽນປະຣິຍັດຕິທຳຕອນຕົ້ນ ແລະ ໂຮງຮຽນປະຣິຍັດຕິທຳຕອນປາຍ.

### ມາດຕາ 20 ສະຖານການສຶກສາສາຍສາມັນສົງ

ສະຖານການສຶກສາສາຍສາມັນສົງໃຫ້ປະຕິບັດຕາມກົດໝາຍວ່າດ້ວຍການສຶກສາ.

### ມາດຕາ 21 ສະຖານການສຶກສາບັນດິດວິທະຍາ

ສະຖານການສຶກສາບັນດິດວິທະຍາ ປະກອບດ້ວຍ ວິທະຍາໄລສົງ, ສະຖາບັນການສຶກສາສົງ ແລະ ມະຫາວິທະຍາໄລສົງ.

### ມາດຕາ 22 ສິ່ງອຳນວຍຄວາມສະດວກຂອງສະຖານການສຶກສາສົງ

ສິ່ງອຳນວຍຄວາມສະດວກຂັ້ນພື້ນຖານ ຂອງສະຖານການສຶກສາສົງປະກອບດ້ວຍອາຄານ, ຫ້ອງຮຽນ ຫ້ອງເຮັດວຽກ ຂອງພະນັກງານຜູ້ບໍລິຫານ, ຫ້ອງພັກຄູ, ຫ້ອງສະໝຸດ, ຫ້ອງປະຊຸມ, ຫ້ອງວາງສະແດງ, ຫ້ອງປະຕິບັດທຳ, ຫ້ອງທົດລອງ ແລະ ສິ່ງອຳນວຍຄວາມສະດວກອື່ນ ຕາມຄວາມຈຳເປັນ ແລະ ເໝາະສົມ.

## ໝວດທີ 5
## ການຈັດຕັ້ງການຮຽນ-ການສອນຂອງການສຶກສາສົງ

### ມາດຕາ 23 ການສຶກສາສາຍປະຣິຍັດຕິທຳ

ການສຶກສາສາຍປະຣິຍັດຕິທຳທຸກຊັ້ນ ແລະ ຂັ້ນຮຽນໃຫ້ຈັດຕັ້ງການຮຽນ-ການສອນ ຢູ່ໃນວັດແຫ່ງດຽວກັນໝົດ ຫຼື ຈັດຕັ້ງເປັນຫ້ອງສອນຢູ່ໃນວັດແຕ່ລະແຫ່ງທີ່ມີຄວາມພ້ອມ ແລະ ເໝາະສົມ.

### ມາດຕາ 24 ການສຶກສາສາຍສາມັນສຶກສາສົງ

ການສຶກສາສາຍສາມັນສຶກສາສົງ ທຸກຊັ້ນ ແລະ ຂັ້ນຮຽນ ໃຫ້ຈັດຕັ້ງການຮຽນ-ການສອນ ຢູ່ໃນວັດແຫ່ງດຽວກັນໝົດຫຼື ຈັດຕັ້ງເປັນລະບົບຢູ່ໃນວັດແຕ່ລະແຫ່ງທີ່ມີຄວາມພ້ອມ ແລະ ເໝາະສົມ.

### ມາດຕາ 25 ການສຶກສາບັນດິດວິທະຍາ

ການສຶກສາບັນດິດວິທະຍາໃຫ້ຈັດຕັ້ງການຮຽນ-ການສອນຕາມຮູບແບບຂອງການສຶກສາສາຍ ປະຣິຍັດທຳ ແລະ ສາຍສາມັນສຶກສາສົງ.ນອກຈາກນັ້ນ, ຍັງສາມາດຈັດຕັ້ງການຮຽນ-ການສອນ ພາກວັນເສົາ-ອາທິດ, ການສຶກສາທາງໄກຕາມຄວາມສາມາດ, ສະພາບຄວາມເປັນຈິງ ແລະ ນະໂຍບາຍການສຶກສາ ຕະຫຼອດຊີວິດ.

## ໝວດທີ 6
## ຜູ້ຮຽນໃນສະຖານການສຶກສາສົງ

**ມາດຕາ 26 ຜູ້ຮຽນໃນສະຖານການສຶກສາສິງ**

ຜູ້ຮຽນໃນສະຖານການສຶກສາສິງມີ ສາມປະເພດ ດັ່ງນີ້:

1. ຜູ້ຮຽນສາຍປະຣິຍັດຕິທຳ ເອີ້ນວ່າ ນັກທຳ-ບາລີ, ເມື່ອຮຽນຈົບ ສາຍປະຣິຍັດຕິທຳແລ້ວ ເອີ້ນວ່າມະຫາ;
2. ຜູ້ຮຽນສາຍສາມັນສຶກສາສິງ ເອີ້ນວ່າ ນັກຮຽນສິງ;
3. ຜູ້ຮຽນບັນດິດວິທະຍາ ເອີ້ນວ່າ ນັກສຶກສາສິງ;

**ມາດຕາ 27 ເງື່ອນໄຂພື້ນຖານຂອງຜູ້ຮຽນໃນສະຖານການສຶກສາສິງ**

ຜູ້ທີ່ຈະເຂົ້າຮຽນໃນສະຖານການສຶກສາສິງທຸກຂັ້ນ ແລະ ທຸກສາຍຕ້ອງມີເງື່ອນໄຂພື້ນຖານ ດັ່ງນີ້:

1. ພຣະພິກຂຸ ຫຼື ສາມະເນນ ທີ່ໄດ້ຮຽນສູດ, ຮຽນເທດຂັ້ນພື້ນຖານຢ່າງໜ້ອຍໜຶ່ງພັນສາ;
2. ພໍ່ຂາວ, ແມ່ຂາວ ແລະ ຄະຣິຫັດ ທີ່ມີເງື່ອນໄຂຕາມທີ່ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ;

**ມາດຕາ 28 ໜ້າທີ່, ຂອບເຂດສິດ ແລະ ພັນທະຂອງຜູ້ຮຽນໃນສະຖານການສຶກສາສິງ**

ຜູ້ຮຽນໃນສະຖານການສຶກສາສິງ ນອກຈາກມີໜ້າທີ່, ຂອບເຂດສິດ ແລະ ພັນທະຕາມທີ່ໄດ້ກຳ ນົດໄວ້ໃນກົດໝາຍວ່າດ້ວຍການສຶກສາ ແລະ ລະບຽບຄຸ້ມຄອງນັກຮຽນ-ນັກສຶກສາແລ້ວ ຍັງມີໜ້າທີ່, ຂອບເຂດສິດ ແລະ ພັນທະ ດັ່ງນີ້:

1. ປະຕິບັດສາສະນະກິດ ແລະ ສາສະນະສຶກສາສິງ ຕາມລະບຽບການ;
2. ປະຕິບັດລະບຽບວິໄນ, ທຳມະນູນປົກຄອງສິງ ແລະ ລະບຽບຄຸ້ມຄອງວັດ.

ສະຖານການສຶກສາສິງ ສາມາດອອກລະບຽບການຄຸ້ມຄອງນັກຮຽນ-ນັກສຶກສາໄດ້.

## ໝວດທີ 7
## ການປະກັນຄຸນນະພາບ ແລະ ວຸດທິບັດການສຶກສາສິງ

**ມາດຕາ 29 ການປະກັນຄຸນນະພາບການສຶກສາສິງ**

ກຳມາທິການສຶກສາສິງສູນກາງ ຮ່ວມກັບກະຊວງສຶກສາທິການ ແລະ ກິລາ ກຳນົດມາດຕະຖານ ລວມກ່ຽວກັບຄຸນນະພາບຂອງການສຶກສາສິງ ເພື່ອໃຫ້ສະຖານການສຶກສາສິງທຸກຂັ້ນປະຕິບັດຕາມມາດຕະຖານດັ່ງກ່າວຢ່າງເປັນເອກະພາບ.

**ມາດຕາ 30 ວຸດທິບັດການສຶກສາສິງ**

ວຸດທິບັດການສຶກສາສິງ ແມ່ນໜັງສືຢັ້ງຢືນການຮຽນຈົບຫຼັກສູດ ສາຍປະຣິຍັດຕິທຳ ແລະ ສາຍສາມັນສຶກສາສິງ ເອີ້ນວ່າ ປະກາສະນີຍະບັດ, ສ່ວນໜັງສືຢັ້ງຢືນການຮຽນຈົບຫຼັກສູດລະດັບບັນດິດວິທະຍາ ເອີ້ນວ່າ ປະຣິນຍາບັດ.

**ມາດຕາ 31 ການທຽບວຸດທິບັດການສຶກສາສິງ**

ການທຽບວຸດທິບັດຈົບການສຶກສາສິງກັບ ວຸດທິບັດຈົບການສຶກສາແຫ່ງຊາດ ມີດັ່ງນີ້:

1. ປະກາສະນີຍະບັດ ຊັ້ນນັກທຳ ທຽບເທົ່າ ປະກາສະນີຍະບັດ ຊັ້ນມັດທະຍົມສຶກສາຕອນຕົ້ນ;
2. ປະກາສະນີຍະບັດຊັ້ນປະຣິຍັດຕິທຳຕອນຕົ້ນທຽບເທົ່າປະກາສະນີຍະບັດຊັ້ນມັດທະຍົມສຶກສາຕອນປາຍ;

3. ປະກາສະນີຍະບັດຊັ້ນປະຣິຍັດຕິທຳຕອນປາຍ ທຽບເທົ່າ ປະກາສະນີຍະບັດຊັ້ນສູງ;
4. ປະກາສະນີຍະບັດຊັ້ນມັດທະຍົມສຶກສາສົງຕອນຕົ້ນທຽບເທົ່າປະກາສະນີຍະບັດຊັ້ນມັດທະຍົມສຶກສາຕອນຕົ້ນ;
5. ປະກາສະນີຍະບັດຊັ້ນມັດທະຍົມສຶກສາສົງຕອນປາຍ ທຽບເທົ່າປະກາສະນີຍະບັດຊັ້ນມັດທະຍົມສຶກສາຕອນປາຍ;
6. ປະຣິນຍາບັດຈົບຊັ້ນອະນຸບັນດິດ,ບັນດິດ,ອັກຄະບັນດິດ ແລະ ມະຫາອັກຄະບັນດິດຂອງການສຶກສາບັນດິດວິທະຍາ ທຽບເທົ່າອະນຸປະຣິນຍາ, ປະລິນຍາຕີ, ປະລິນຍາໂທ ແລະ ປະລິນຍາເອກ ຕາມລຳດັບຂອງການສຶກສາຊັ້ນສູງແຫ່ງຊາດ.

**ມາດຕາ 32 ການຄຸ້ມຄອງວຸດທິບັດການສຶກສາສົງ.**

ການຄຸ້ມຄອງວຸດທິບັດການສຶກສາສົງທຸກຊັ້ນ ແລະ ທຸກສາຍໃຫ້ປະຕິບັດ ດັ່ງນີ້:

1. ຫ້ອງການກຳມາທິການສຶກສາສົງແຂວງ, ນະຄອນຫຼວງເປັນຜູ້ອອກໜັງສືຢັ້ງຢືນ ແລະ ປະກາສະນີຍະບັດຈົບຊັ້ນມັດທະຍົມສຶກສາສົງຕອນຕົ້ນ;
2. ຫ້ອງການກຳມາທິການສຶກສາສົງສູນກາງ ເປັນຜູ້ອອກໜັງສືຢັ້ງຢືນ ແລະ ປະກາສະນີຍະບັດ ຈົບຊັ້ນນັກທຳ, ປະຣິຍັດຕິທຳຕອນຕົ້ນ, ປະຣິຍັດຕິທຳຕອນປາຍ ແລະ ມັດທະຍົມສຶກສາສົງຕອນປາຍ;
3. ສະຖານການສຶກສາສົງ ລະດັບວິທະຍາໄລ, ສະຖາບັນການສຶກສາສົງ ແລະ ມະຫາວິທະຍາໄລສົງ ທີ່ກ່ຽວຂ້ອງ ເປັນຜູ້ອອກໜັງສືຢັ້ງຢືນ ແລະ ປະຣິນຍາບັດຈົບການສຶກສາບັນດິດວິທະຍາ ຕາມລະບຽບການທີ່ໄດ້ກຳນົດ.

ຮູບແບບປະກາສະນີຍະບັດ ແລະ ປະຣິນຍາບັດ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

## ໝວດທີ 8
## ຄູ ແລະ ບຸກຄະລາກອນການສຶກສາສົງ

**ມາດຕາ 33 ຄູສຶກສາສົງ.**

ຄູສຶກສາສົງ ແມ່ນບັນພະຊິດ ແລະ ຄະຣືຫັດ ທີ່ປະຕິບັດໜ້າທີ່ສິດສອນ ແລະ ຖ່າຍທອດຄວາມຮູ້ໃຫ້ແກ່ຜູ້ຮຽນດ້ວຍວິທີການ ແລະ ຮູບແບບຕ່າງໆ ໃນສະຖານການສຶກສາສົງທຸກຊັ້ນ, ທຸກສາຍ ແລະ ທຸກລະດັບ.

**ມາດຕາ 34 ບຸກຄະລາກອນການສຶກສາສົງ**

ບຸກຄະລາກອນການສຶກສາສົງ ແມ່ນຜູ້ເຮັດໜ້າທີ່ຄຸ້ມຄອງ, ບໍລິຫານ, ກວດກາ, ແນະນຳ, ຊ່ວຍເຫຼືອ ແລະ ອຳນວຍຄວາມສະດວກ ໃຫ້ແກ່ການຮຽນ-ການສອນ ຢູ່ໃນສະຖານການສຶກສາສົງທຸກຊັ້ນ, ທຸກສາຍ ແລະ ທຸກລະດັບ.

**ມາດຕາ 35 ການບັນຈຸຄູ ແລະ ບຸກຄະລາກອນການສຶກສາສົງ**

ກະຊວງສຶກສາທິການ ແລະ ກິລາ ເປັນຜູ້ອະນຸມັດ ການບັນຈຸບັນພະຊິດ ແລະ ຄະຣືຫັດ ເປັນຄູ ແລະ ບຸກຄະລາກອນການສຶກສາສົງ ຕາມການສະເໜີຂອງກຳມາທິການສຶກສາສົງ ໂດຍການເຫັນດີ ຂອງອົງການພຸດທະສາສະໜາສຳພັນລາວ.

ມາດຕາ 36 ມາດຕະຖານໜ້າທີ່, ຂອບເຂດສິດ ແລະ ພັນທະຂອງຄູ ແລະ ບຸກຄະລາກອນ ການສຶກສາສົງ.

ມາດຕະຖານໜ້າທີ່ ຂອບເຂດສິດ ແລະ ພັນທະຂອງຄູ ແລະ ບຸກຄະລາກອນການສຶກສາສົງ ນອກຈາກທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍການສຶກສາ ແລະ ລະບຽບລັດຖະກອນແລ້ວ ຍັງມີ ເພີ່ມ ດັ່ງນີ້:

1. ມີຄວາມຮູ້ ທາງດ້ານພຸດທະສາສະໜາ;
2. ປະຕິບັດສາສະນະກິດ ແລະ ສາສະນະສຶກສາ ຕາມການມອບໝາຍ;
3. ປະຕິບັດລະບຽບວິໄນ ແລະ ທຳມະນູນປົກຄອງສົງ ສຳລັບຜູ້ທີ່ເປັນບັນພະຊິດ.

ມາດຕາ 37 **ການກຳນົດຊົ່ວໂມງສອນ.**

ຄູທີ່ເປັນບັນພະຊິດທີ່ສອນໃນສາຍປະຣິຍັດຕິທຳ, ສາຍສາມັນສຶກສາສົງຕ້ອງສອນຢ່າງໜ້ອຍສິບສອງຊົ່ວໂມງຕໍ່ອາທິດ. ຜູ້ທີ່ສອນຢູ່ວິທະຍາໄລສົງ, ສະຖາບັນການສຶກສາສົງ ແລະ ມະຫາວິທະຍາໄລສົງ ຕ້ອງສອນຢ່າງໜ້ອຍແປດຊົ່ວໂມງຕໍ່ອາທິດ.

ສຳລັບຄູສອນທີ່ເປັນຄະຣືຫັດໃຫ້ປະຕິບັດຕາມລະບຽບການທີ່ກະຊວງສຶກສາທິການ ແລະ ກິລາ ກຳນົດ

## ໝວດທີ 9
## ນະໂຍບາຍການອຸດໜູນ ແລະ ສົ່ງເສີມການສຶກສາສົງ

ມາດຕາ 38 **ນະໂຍບາຍການອຸດໜູນ**

ຄູ ແລະ ບຸກຄະລາກອນການສຶກສາສົງ ທີ່ໄດ້ຮັບການບັນຈຸຕາມມາດຕາ 35 ຂອງດຳລັດ ສະບັບນີ້ ໄດ້ຮັບນະໂຍບາຍອຸດໜູນເປັນເງິນນິດຈະພັດເຈັດສິບສ່ວນຮ້ອຍ ຂອງວຸດທິການສຶກສາທີ່ ຮຽນຈົບຕາມກົດໝາຍ ແລະ ລະບຽບການກ່ຽວກັບພະນັກງານ-ລັດຖະກອນ.

ມາດຕາ 39 **ນະໂຍບາຍການສົ່ງເສີມ**

ຄູ ແລະ ບຸກຄະລາກອນການສຶກສາສົງ ທີ່ໄດ້ຮັບການບັນຈຸຕາມມາດຕາ 35 ຂອງດຳລັດສະບັບນີ້ ຖ້າໄດ້ປະຕິບັດໜ້າທີ່ສິດສອນ ແລະ ວຽກງານການສຶກສາສົງ ເປັນປົກກະຕິສິບປີຂຶ້ນໄປ ຫາກໄດ້ລາສິກຂາ ແລະ ສືບຕໍ່ປະຕິບັດໜ້າທີ່ດັ່ງກ່າວໃຫ້ທຽບຊັ້ນ-ຂັ້ນເງິນເດືອນ ແລະ ຄິດໄລ່ປີການຄືນໃຫ້ຜູ້ກ່ຽວຕາມກົດໝາຍ ແລະ ລະບຽບການກ່ຽວກັບພະນັກງານ-ລັດຖະກອນ.

ມາດຕາ 40 **ການພັດທະນາວິຊາຊີບຄູ ແລະ ບຸກຄະລາກອນການສຶກສາສົງ**

ອົງການພຸດທະສາສະໜາສຳພັນລາວ, ກະຊວງສຶກສາທິການ ແລະ ກິລາ ແລະ ສະຖານການສຶກສາສົງ ສ້າງເງື່ອນໄຂອຳນວຍຄວາມສະດວກໃຫ້ແກ່ຄູ ແລະ ບຸກຄະລາກອນການສຶກສາສົງ ໄດ້ປະຕິບັດໜ້າທີ່ເຕັມຄວາມສາມາດ, ໄດ້ຮັບການຝຶກອົບຮົມ, ຍົກລະດັບພັດທະນາວິຊາສະເພາະ ທັງຢູ່ພາຍໃນ ແລະ ຕ່າງປະເທດ ແລະ ໄດ້ຮັບການດຳລົງຕຳແໜ່ງບໍລິຫານ ຫຼື ຕຳແໜ່ງວິຊາການຄູ ຕາມລະບຽບການ.

## ໝວດທີ 10
## ການຄຸ້ມຄອງ ແລະ ການກວດກາ ການ-ສຶກສາສົງ

ມາດຕາ 41 ອົງການຄຸ້ມຄອງ ການສຶກສາສົງ

ລັດຖະບານ ເປັນຜູ້ຄຸ້ມຄອງການສຶກສາສົງຢ່າງລວມສູນ ແລະ ເປັນເອກະພາບໃນຂອບເຂດທົ່ວປະເທດ ໂດຍມອບໃຫ້ອົງການພຸດທະສາສະໜາສຳພັນລາວ ຮ່ວມກັບກະຊວງສຶກສາທິການ ແລະ ກິລາ ເປັນຜູ້ຮັບຜິດຊອບໂດຍກົງ ແລະ ເປັນເຈົ້າການປະສານສົມທົບກັບຂະແໜງການ, ອົງການຈັດຕັ້ງຂັ້ນສູນກາງ ແລະ ອົງການ ປົກຄອງທ້ອງຖິ່ນ ກ່ຽວກັບການບໍລິຫານ, ຄຸ້ມຄອງ, ພັດທະນາ ແລະ ສົ່ງເສີມວຽກງານການສຶກສາສົງ.

ອົງການຄຸ້ມຄອງການສຶກສາສົງ ປະກອບດ້ວຍ:

1. ກຳມາທິການສຶກສາສົງ ຂັ້ນສູນກາງ;
2. ກຳມາທິການສຶກສາສົງ ຂັ້ນແຂວງ;
3. ກຳມາທິການສຶກສາສົງຂັ້ນເມືອງ;
4. ສະຖານການສຶກສາສົງ.

ສຳລັບໂຄງປະກອບ, ໜ້າທີ່ ແລະ ຂອບເຂດສິດຂອງອົງການຄຸ້ມຄອງການສຶກສາສົງແຕ່ລະຂັ້ນ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

**ມາດຕາ 42 ສະພາທີ່ປຶກສາການສຶກສາສົງ**

ສະພາທີ່ປຶກສາການສຶກສາສົງແມ່ນການຈັດຕັ້ງໜຶ່ງປະກອບດ້ວຍຫຼາຍພາກສ່ວນທີ່ກ່ຽວຂ້ອງດັ່ງນີ້:

1. ຮອງປະທານ ສູນກາງອົງການພຸດທະສາສະໜາສຳພັນລາວ ເປັນປະທານ;
2. ຮອງລັດຖະມົນຕີ ກະຊວງສຶກສາທິການ ແລະ ກິລາ ເປັນຮອງປະທານ;
3. ຫົວໜ້າກຳມາທິການສຶກສາສົງສູນກາງ ເປັນຮອງປະທານ;
4. ຫົວໜ້າຫ້ອງການ ກະຊວງສຶກສາທິການ ແລະ ກິລາ ເປັນກຳມະການ;
5. ຫົວໜ້າກົມຈັດຕັ້ງ-ພະນັກງານ ກະຊວງສຶກສາທິການ ແລະ ກິລາ ເປັນກຳມະການ;
6. ຫົວໜ້າກົມແຜນການ ກະຊວງສຶກສາທິການ ແລະ ກິລາ ເປັນກຳມະການ;
7. ຫົວໜ້າກົມການເງິນ ກະຊວງສຶກສາທິການ ແລະ ກິລາ ເປັນກຳມະການ;
8. ຫົວໜ້າກົມການສຶກສາຊັ້ນສູງ ກະຊວງສຶກສາທິການ ແລະ ກິລາ ເປັນກຳມະການ;
9. ຫົວໜ້າກົມສ້າງຄູ ກະຊວງສຶກສາທິການ ແລະ ກິລາ ເປັນກຳມະການ;
10. ຫົວໜ້າກົມມັດທະຍົມສຶກສາ ກະຊວງສຶກສາທິການ ແລະ ກິລາ ເປັນກຳມະການ;
11. ຫົວໜ້າກົມສາສະໜາ ສູນກາງແນວລາວສ້າງຊາດ ເປັນກຳມະການ;
12. ຫົວໜ້າກົມວຽກງານຊົນເຜົ່າ ແລະ ສາສະໜາ ກະຊວງພາຍໃນ ເປັນກຳມະການ;
13. ຫົວໜ້າກົມງົບປະມານ ກະຊວງການເງິນ ເປັນກຳມະການ;
14. ຜູ້ອຳນວຍການວິທະຍາໄລສົງແຕ່ລະແຫ່ງ ເປັນກຳມະການ;
15. ປະທານ ອົງການພຸດທະສາສະໜາສຳພັນລາວທຸກແຂວງ, ນະຄອນຫຼວງ ເປັນກຳມະການ;
16. ຫົວໜ້າກຳມາທິການສຶກສາສົງແຂວງ, ນະຄອນຫຼວງ ເປັນກຳມະການ;
17. ຜູ້ຊົງຄຸນວຸດທິຝ່າຍສົງ ສອງ - ຫ້າ ອົງ ເປັນກຳມະການ;
18. ຜູ້ຊົງຄຸນວຸດທິຝ່າຍຄະຣືຫັດ ສອງທ່ານ ເປັນກຳມະການ;
19. ຫົວໜ້າຫ້ອງການກຳມາທິການສຶກສາສົງສູນກາງ ເປັນກຳມະການ ແລະ ຫົວໜ້າກອງເລຂາ;

ໜ້າທີ່,ຂອບເຂດສິດ ແລະ ການເຄື່ອນໄຫວຂອງສະພາທີ່ປຶກສາການສຶກສາສົງໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

ມາດຕາ 43 ການແຕ່ງຕັ້ງຜູ້ບໍລິຫານການສຶກສາສົງ

ຂະແໜງການສຶກສາທິການ ແລະ ກິລາ ເປັນຜູ້ແຕ່ງຕັ້ງ ບັນພະຊິດເປັນຫົວໜ້າ, ບັນພະຊິດ ຫຼື ຄະຣືຫັດ ເປັນຮອງຫົວໜ້າຜູ້ບໍລິຫານການສຶກສາສົງຂັ້ນຕ່າງໆ ຕາມການສະເໜີຂອງກຳມາທິການສຶກສາສົງ ແລະ ອົງການພຸດທະສາສະໜາສຳພັນລາວ ຕາມການແບ່ງຂັ້ນຄຸ້ມຄອງ.

ມາດຕາ 44 **ອົງການກວດກາ ວຽກງານການສຶກສາສົງ**

ອົງການກວດກາການສຶກສາສົງປະກອບດ້ວຍ ອົງການກວດກາພາຍໃນ ແລະ ອົງການກວດກາພາຍນອກ.

ອົງການກວດກາພາຍໃນ ແມ່ນອົງການພຸດທະສາສະໜາສຳພັນລາວ, ກຳມາທິການສຶກສາສົງ ແລະ ສະຖານການສຶກສາສົງ.

ອົງການກວດກາພາຍນອກ ແມ່ນກະຊວງສຶກສາທິການ ແລະ ກິລາ, ກະຊວງພາຍໃນ ແລະ ອົງການແນວລາວສ້າງຊາດ ຕາມພາລະບົດບາດ,ໜ້າທີ່ ແລະ ຂອບເຂດສິດຂອງໃຜລາວ.

## ໝວດທີ 11
## ງົບປະມານ ແລະ ກອງທຶນພັດທະນາ ການສຶກສາສົງ

ມາດຕາ 45 **ງົບປະມານສຳລັບການສຶກສາສົງ**

ສູນກາງອົງການພຸດທະສາສະໜາສຳພັນລາວ ແລະກະຊວງສຶກສາທິການ ແລະ ກິລາມີຄວາມຮັບຜິດຊອບໃນການຈັດສັນງົບປະມານສຳລັບເງິນນິດຈະພັດ, ເງິນນະໂຍບາຍ, ເງິນບໍລິຫານ, ເງິນສົ່ງເສີມວິຊາການ, ເງິນຊື້ວັດຖຸປະກອນການສຶກສາ ແລະ ພັດທະນາພື້ນຖານໂຄງລ່າງຂອງການສຶກສາສົງ.

ມາດຕາ 46 **ແຫຼ່ງທຶນພັດທະນາ ແລະ ສົ່ງເສີມການສຶກສາສົງ**

ແຫຼ່ງທຶນພັດທະນາ ແລະ ສົ່ງເສີມການສຶກສາສົງທາງດ້ານວິຊາການ, ຄູ, ບຸກຄະລາກອນ, ພື້ນຖານໂຄງລ່າງ ແລະ ອື່ນໆ ແມ່ນໄດ້ມາຈາກ:

1. ການສະໜອງງົບປະມານຂອງລັດໃນແຕ່ລະປີ;
2. ການອຸປະຖຳ ຂອງອົງການຈັດຕັ້ງສັງຄົມ ທັງພາຍໃນ ແລະ ຕ່າງປະເທດ;
3. ການບໍລິຈາກຂອງບຸກຄົນ, ນິຕິບຸກຄົນ ແລະ ສາສະນິກະຊົນ ທັງພາຍໃນ ແລະ ຕ່າງປະເທດ.

ມາດຕາ 47 **ການສ້າງຕັ້ງກອງທຶນພັດທະນາການສຶກສາສົງ**

ລັດ ອະນຸຍາດໃຫ້ສ້າງຕັ້ງກອງທຶນພັດທະນາການສຶກສາສົງ ຊຶ່ງໄດ້ກຳນົດໄວ້ໃນລະບຽບການ ຕ່າງຫາກ.

## ໝວດທີ 12
## ການພົວພັນ ແລະ ຮ່ວມມື

ມາດຕາ 48 ການຮ່ວມມືພາຍໃນ

ສະຖານການສຶກສາສົງທຸກຂັ້ນ ທຸກສາຍ ມີສິດພົວພັນຮ່ວມມືທາງດ້ານວິຊາການກັບສະຖານການສຶກສາພາກລັດ ແລະ ພາກເອກະຊົນ ຕາມຂອບເຂດສິດ ແລະ ພາລະບົດບາດຂອງ ສະຖານການສຶກສາສົງ ໂດຍສອດຄ່ອງກັບກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

**ມາດຕາ 49 ການຮ່ວມມືກັບຕ່າງປະເທດ ແລະ ອົງການຈັດຕັ້ງສາກົນ**

ກະຊວງສຶກສາທິການ... 

ກໍາມາທິການສຶກສາສົງສູນກາງມີສິດພົວພັນຮ່ວມມືກັບອົງການຈັດຕັ້ງສາກົນ, ອົງການຈັດຕັ້ງທາງ ສັງຄົມ, ອົງການຈັດຕັ້ງສາສະໜາ ໂດຍສະເພາະອົງການຊາວພຸດຕ່າງປະເທດເພື່ອຂົນຂວາຍການ ຊ່ວຍເຫຼືອທາງດ້ານວັດຖຸ, ປັດໃຈ, ທຶນຮອນ ແລະ ຮ່ວມມືທາງດ້ານວິຊາການກັບສະຖານການສຶກສາຂອງຕ່າງປະເທດ ເພື່ອພັດທະນາການສຶກສາສົງຂອງລາວ ໂດຍສອດຄ່ອງກັບນະໂຍບາຍ, ກົດໝາຍ ແລະ ລະບຽບການຂອງລັດຖະບານ.

**ໝວດທີ13**

**ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ**

**ມາດຕາ 50 ນະໂຍບາຍຕໍ່ຜູ້ມີຜົນງານ**

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ມີຜົນງານດີເດັ່ນ ໃນການປະຕິບັດດໍາລັດສະບັບນີ້ ຈະໄດ້ຮັບການຍ້ອງຍໍ ຫຼື ນະໂຍບາຍອື່ນ ຕາມລະບຽບການ.

**ມາດຕາ 51 ມາດຕະການຕໍ່ຜູ້ລະເມີດ**

ບຸກຄົນ ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ໄດ້ລະເມີດດໍາລັດສະບັບນີ້ ຈະຖືກສຶກສາອົບຮົມ, ກ່າວເຕືອນ ລົງວິໄນ, ປັບໃໝ ແລະ ໃຊ້ແທນທາງແພ່ງ ຫຼື ຖືກລົງໂທດທາງອາຍາ ຕາມກໍລະນີເບົາ ຫຼື ໜັກ.

**ໝວດທີ 14**

**ບົດບັນຍັດສຸດທ້າຍ**

**ມາດຕາ 52 ການຈັດຕັ້ງປະຕິບັດ**

ມອບໃຫ້ອົງການພຸດທະສາສະໜາສໍາພັນລາວ ແລະ ກະຊວງສຶກສາທິການ ແລະ ກິລາ ເປັນຜູ້ຈັດຕັ້ງປະຕິບັດດໍາລັດສະບັບນີ້ ໃຫ້ສອດຄ່ອງກັບສະພາບຕົວຈິງ ແຕ່ລະໄລຍະ.

ກະຊວງ, ອົງການລັດທຽບເທົ່າກະຊວງ, ອົງການປົກຄອງທ້ອງຖິ່ນ, ສະຖານການສຶກສາສົງ ແລະ ພາກສ່ວນທີ່ກ່ຽວຂ້ອງ ຈົ່ງຮັບຮູ້ ແລະ ປະຕິບັດດໍາລັດສະບັບນີ້ ຕາມພາລະບົດບາດຂອງຕົນ.

**ມາດຕາ 53 ຜົນສັກສິດ**

ດໍາລັດສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນ ແລະ ພາຍຫຼັງໄດ້ລົງໃນຈົດໝາຍເຫດທາງລັດຖະການສິບຫ້າວັນ.

ດໍາລັດສະບັບນີ້ ປ່ຽນແທນດໍາລັດວ່າດ້ວຍການສຶກສາສົງ ສະບັບເລກທີ **139/** ນຍ, ລົງວັນທີ **24** ກໍລະກົດ **1996** ແລະ ດໍາລັດວ່າດ້ວຍເງິນນິດຈະພັດຂອງພຣະສົງ ທີ່ປະກອບສ່ວນເຮັດວຽກໃນຂະແໜງການສຶກສາ ສະບັບເລກທີ **173/**ນຍ, ລົງວັນທີ **5** ສິງຫາ **1998.**

ຂໍ້ກໍານົດ, ບົດບັນຍັດໃດ ທີ່ຂັດກັບດໍາລັດສະບັບນີ້ ລ້ວນແຕ່ຖືກຍົກເລີກ.

**ລັດຖະບານແຫ່ງ ສປປ ລາວ,**

**ນາຍົກລັດຖະມົນຕີ**

ນາຍົກລັດຖະມົນຕີ

**ທອງລຸນ ສີສຸລິດ**